# ການມີສ່ວນຮ່ວມຂອງນັກສຶກສາ ຕໍ່ກັບກິດຈະກຳນັກສຶກສາ ໃນ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

ວຽງໄຊ ທຳມະວົງສາ[1], ອາກາວ ລີວົງສາ[2], ບຸນຖົມ ຊາມົນຕຣີ[2], ວຽງນະຄອນ ດອນພະສິດ[1], ຄຳໃບ ທຳມະວົງສາ[3], ມະນີວອນ ພັນທະວົງ[3], ພຸດທະສອນ ທຳມະວົງສາ[3].

1. ພະແນກກິດຈະການນັກສຶກສາ, ຫ້ອງການວິຊາການ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ
2. ຫ້ອງການບໍລິຫານ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ
3. ຄະນະທັນຕະແພດສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

ໄດ້ຮັບຕົ້ນສະບັບ ທີ 23 ເມສາ 2022, ໄດ້ຮັບບົດທີ່ກວດແກ້ຄືນ ທີ 20 ມີຖຸນາ 2022, ເຫັນດີໃຫ້ຈັດພິມ 20 ຕຸລາ 2022

## ບົດຄັດຫຍໍ້

**ເຫດຜົນ ແລະ ຄວາມສຳຄັນ**: ສະຖາບັນການສຶກສາຂັ້ນສູງດ້ານວິທະຍາສາດການແພດມີໜ້າທີ່ສຳຄັນໃນການຜະລິດບຸກຄະລາກອນ ເພື່ອຕອບສະໜອງແຜນຍຸດທະສາດ ເຊິ່ງບຸກຄະລາກອນການແພດແມ່ນຊັບພະຍາກອນທີ່ສຳຄັນ ຊຶ່ງມີໜ້າທີ່ເບິ່ງແຍງຮັກສາ, ສົ່ງເສີມສຸຂະພາບ, ປ້ອງກັນພະຍາດ ແລະ ຟື້ນຟູສຸຂະພາບຂອງຄົນເຈັບ. ການມີສ່ວນຮ່ວມກິດຈະກຳຂອງນັກສຶກສາເປັນອົງປະກອບສຳຄັນຢ່າງໜຶ່ງທີ່ຊ່ວຍເສີມສ້າງພັດທະນາຄຸນລັກສະນະຄວາມເປັນນັກສຶກສາທີ່ເກັ່ງຮອບດ້ານ.

**ຈຸດປະສົງ:** ເພື່ອສຶກສາການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບກິດຈະກຳນັກສຶກສາ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

**ວິທີວິທະຍາໃນການສຶກສາ:** ການສຶກສາຄັ້ງນີ້ແມ່ນການສຶກສາແບບພັນລະນາມະຈຸດໃດໜຶ່ງ (Cross-sectional descriptive study) ໂດຍໃຊ້ວິທີການຄົ້ນຄວ້າແບບປະລິມານ (Quantitative), ການເກັບຂໍ້ມູນແມ່ນໃຊ້ແບບຟອມສອບຖາມສຳພາດເຊິ່ງໜ້າ, ເຂົ້າຂໍ້ມູນໂດຍໂປຼແກມ Epi-data ແລະ ວິເຄາະຂໍ້ມູນໂດຍໃຊ້ໂປຼແກມ SPSS.

**ຜົນການສຶກສາ:** ຜູ້ເຂົ້າຮ່ວມການສຶກສາທັງໝົດ 331 ຄົນ, ເປັນເພດຍິງຫຼາຍກ່ວາເຄິ່ງໜຶ່ງ (63.1%). ຄວາມຄິດເຫັນຂອງນັກສຶກສາກ່ຽວກັບການມີສ່ວນຮ່ວມຕໍ່ກັບກິດຈະກຳພົບວ່າຢູ່ໃນລະດັບຫຼາຍ ($\bar{X}$=3.88, S.D=0.54), ເມື່ອພິຈາລະນາໃນແຕ່ລະດ້ານເຫັນວ່າ: ດ້ານການສົ່ງເສີມວິຊາການໂດຍລວມຢູ່ໃນລະດັບຫຼາຍ ($\bar{X}$=3.80, S.D=0.58), ດ້ານກິລາໂດຍລວມຢູ່ໃນລະດັບຫຼາຍ ($\bar{X}$=3.91, S.D=0.65), ດ້ານສິລະປະວັດທະນະທຳໂດຍລວມຢູ່ໃນລະດັບຫຼາຍ ($\bar{X}$=3.87, S.D=0.70), ດ້ານອາສາສະໝັກ ໂດຍລວມຢູ່ໃນລະດັບຫຼາຍ ($\bar{X}$=3.94, S.D=0.65), ການມີສ່ວນຮ່ວມຈຳແນກຕາມເພດໂດຍລວມ ເຫັນວ່າແຕ່ລະດ້ານບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິ P= <0.05.

**ສະຫຼຸບ:** ນັກສຶກສາຈາກຄະນະຕ່າງໆ ມີຄວາມຄິດເຫັນຕໍ່ກັບການມີສ່ວນຮ່ວມກັບກິດຈະກຳ ໂດຍລວມແຕກຕ່າງກັນຢ່າງມີຄວາມສຳຄັນ ແລະ ເມື່ອພິຈາລະນາແຕ່ລະດ້ານແລ້ວເຫັນວ່າ ດ້ານສົ່ງເສີມວິຊາການ, ດ້ານກິລາ ແລະ ດ້ານສິລະປະ-ວັດທະນະທຳ ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນ, ຍົກເວັ້ນ ດ້ານອາສາສະໝັກ.

**ຄຳສັບສຳຄັນ:** ການມີສ່ວນຮ່ວມ, ກິດຈະກຳນັກສຶກສາ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

***ຕິດຕໍ່ຜູ້ຂຽນ:** ວຽງໄຊ ທຳມະວົງສາ, ໂທລະສັບ: +85620 5540 2836, ອີເມລ: Sayvonh@hotmail.com

## ບົດນຳ

ການພັດທະນາປະເທດຊາດໃນຍຸກປັດຈຸບັນ ພັກ ແລະ ລັດຖະບານ ໄດ້ສຸມໃສ່ໃນການຊີ້ນຳການພັດທະນາ ວັດທະນະທຳ-ສັງຄົມ, ຖືເອົາວຽກງານການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດເປັນໃຈກາງສຳຄັນໃນການພັດທະນາ, ສົ່ງເສີມສຸຂະພາບດ້ານໂພຊະນາການຂັ້ນພື້ນຖານໃນໂຮງຮຽນ ເພື່ອໃຫ້ສອດຄ່ອງກັບການພັດທະນາເສດຖະກິດສັງຄົມ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດເພື່ອຮັບປະກັນໃຫ້ໄດ້ 3 ລັກສະນະຂອງການສຶກສາຄື: ລັກສະນະຊາດ, ລັກສະນະວິທະຍາສາດທັນສະໄໝ ແລະ ລັກສະນະມະຫາຊົນ ໂດຍມີ 5 ຫຼັກມູນຂອງການສຶກສາຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ພະລະສຶກສາ, ສິລະປະສຶກສາ ແລະ ແຮງງານສຶກສາ ຂອງຂະແໜງການສຶກສາ ແລະ ກິລາ (ຄະນະອົບຮົມສູນກາງພັກ, 2012).

ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ເປັນສະຖາບັນການສຶກສາຂັ້ນສູງດ້ານວິທະຍາສາດການແພດແຫ່ງໜຶ່ງ ເຊິ່ງມີໜ້າທີ່ສຳຄັນໃນການຜະລິດບຸກຄະລາກອນ ເພື່ອຕອບສະໜອງແຜນຍຸດທະສາດ ເຊິ່ງບຸກຄະລາກອນການແພດແມ່ນຊັບພະຍາກອນທີ່ສຳຄັນ ຊຶ່ງມີໜ້າທີ່ເບິ່ງແຍງຮັກສາ, ສົ່ງເສີມສຸຂະພາບ, ປ້ອງກັນພະຍາດ ແລະ ຟື້ນຟູສຸຂະພາບ ຂອງຄົນເຈັບ ຊຶ່ງເປັນວຽກທີ່ມີປະໂຫຍດຕໍ່ມວນມະນຸດ. ພ້ອມກັນນັ້ນ, ຍັງກໍ່ສ້າງບຸກຄະລາກອນຂະແໜງສາທາລະນະສຸກ ໃຫ້ມີຄຸນສົມບັດສິນທຳປະຕິບັດ, ຈັນຍາບັນ ຈັນຍາທຳວິຊາຊີບ ແລະ ຄວາມຮູ້ຄວາມສາມາດ ທາງດ້ານວິຊາສະເພາະທີ່ແນ່ນອນເພື່ອຮັບໃຊ້ສັງຄົມ ແລະ ເປັນສະຖາບັນທີ່ສ້າງ ແລະ ພັດທະນາຫຼັກສູດ, ປື້ມຕຳລາຮຽນເພື່ອຈັດການຮຽນ-ການສອນໃຫ້ຂະແໜງວິຊາຕ່າງໆ ໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມຂອງຊາດ, ຄຽງຄູ່ກັບນັ້ນກໍ່ຍັງໄດ້ຈັດຕັ້ງເຄື່ອນໄຫວກິດຈະກຳນັກສຶກສາ ເພື່ອສົ່ງເສີມວິຊາສະເພາະ, ເພື່ອເສີມສ້າງຄວາມຮູ້ຄວາມສາມາດດ້ານທັກສະກິລາກາຍຍະກຳ ຕ່າງໆ, ເພື່ອປົກປັກຮັກສາ ແລະ ສົ່ງເສີມສິລະປະ-ວັດທະນະທຳອັນດີງາມຂອງຊາດ, ໄດ້ສົມທົບກັບພາກສ່ວນຕ່າງໆເພື່ອຮັບເອົາວັດທະນະທຳອັນຍອດຍິ່ງ ແລະ ກ້າວໜ້າຂອງໂລກ (ມະຫາວິທະໄລ ວິທະຍາສາດ ສຸຂະພາບ, 2017).

ພະແນກກິດຈະການນັກສຶກສາເປັນພະແນກໜຶ່ງທີ່ຂຶ້ນກັບ ຫ້ອງການວິຊາການ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ມີໜ້າທີ່ໃນການເຄື່ອນໄຫວວຽກງານກິດຈະກຳຕ່າງໆ ຂອງມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ເພື່ອປະກອບສ່ວນເຂົ້າໃນການສຶກສາ ອົບຮົມການເມືອງແນວຄິດຂອງນັກສຶກສາ, ອຳນວຍຄວາມສະດວກໃນການປະຕິບັດກິດຈະກຳຕ່າງໆ ໃຫ້ແກ່ນັກສຶກສາທັງພາຍໃນ ແລະ ຕ່າງປະເທດເຊັ່ນ: ດ້ານການຮຽນ-ການສອນ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ດ້ານກິລາກາຍະກຳ, ດ້ານສິລະປະວັນນະຄະດີ, ວັດທະນະທຳ-ສັງຄົມ, ທັດສະນະສຶກສາ, ອອກແຮງງານລວມ, ດ້ານການຊ່ວຍເຫຼືອສັງຄົມ, ການບໍລິຈາກເລືອດ ແລະ ອື່ນໆ. ທຸກໆການເຄື່ອນໄຫວກິດຈະກຳນັກສຶກສາແມ່ນອີງໃສ່ກົດໝາຍ ແລະ ລະບຽບການ ເປັນຕົ້ນແມ່ນແຜນພັດທະນາຊັບພະຍາກອນມະນຸດເພື່ອສຸຂະພາບ ແລະ ແຜນປະຕິຮູບການສຶກສາຊັ້ນສູງ, ເພື່ອເຮັດໃຫ້ນັກສຶກສາມີຄວາມຮູ້, ມີຄວາມສາມາດ, ມີນໍ້າໃຈເສຍສະຫຼະ, ມີຄຸນສົມບັດສິນທຳປະຕິບັດ ແລະ ມີສຸຂະພາບທີ່ສົມບູນ ເຊິ່ງທຸກໆກິດຈະກຳທີ່ຈັດຂຶ້ນເພື່ອເຮັດໃຫ້ນັກສຶກສາເກີດການຮຽນຮູ້, ເພີ່ມທັກສະ ແລະ ປະສົບການທີ່ຈຳເປັນ ແລະ ເປັນຜົນປະໂຫຍດຫຼາຍທີ່ສຸດຕໍ່ສັງຄົມ ທີ່ສຳຄັນນັກສຶກສາຕ້ອງຍຶດຖືການສຶກສາເປັນສິ່ງສຳຄັນທີ່ສຸດ ກິດຈະກຳນັກສຶກສາເປັນອົງປະກອບສຳຄັນຢ່າງໜຶ່ງທີ່ຊ່ວຍເສີມສ້າງພັດທະນາຄຸນລັກສະນະຄວາມເປັນນັກສຶກສາທີ່ເກັ່ງຮອບດ້ານ (ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, 2019).

## ວິທີວິທະຍາການຄົ້ນຄວ້າ

### ການອອກແບບການຄົ້ນຄວ້າ

ການສຶກສາຄັ້ງນີ້ ແມ່ນການສຶກສາຮູບແບບພັນລະນາ ນະຈຸດເວລາໃດໜຶ່ງ (Cross-sectional descriptive study) ໂດຍໃຊ້ວິທີການຄົ້ນຄວ້າແບບປະລິມານ (Qualitative).

### ສະຖານທີ່ ແລະ ໄລຍະເວລາການຄົ້ນຄວ້າ

ການສຶກສາໃນຄັ້ງນີ້ແມ່ນໄດ້ຈັດຕັ້ງປະຕິບັດຢູ່ທີ່ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, ນະຄອນຫຼວງວຽງຈັນ, ສປປ ລາວ. ກຳນົດໄລຍະເວລາ 6 ເດືອນ ເລີ່ມແຕ່ ເດືອນກັນຍາ ປີ 2021 ຫາ ເດືອນມີນາ ປີ 2022 ແລະ ໄລຍະເວລາການໃນການເກັບຂໍ້ມູນແມ່ນເລີ່ມແຕ່ວັນທີ 1 ມັງກອນ ຫາ 31 ມັງກອນ 2022.

### ປະຊາກອນສຶກສາ

ປະຊາກອນສຶກສາແມ່ນນັກສຶກສາ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ທີ່ກຳລັງສຶກສາຢູ່ຊັ້ນປີທີ 1 ຫາ ປີທີ 3 ຄະນະວິຊາຄື: ຄະນະແພດສາດ, ຄະນະທັນຕະແພດສາດ, ຄະນະເພສັຊສາດ, ຄະນະພະຍາບານສາດ ແລະ ຄະນະເຕັກນິກການແພດ.

### ເງື່ອນໄຂການເຂົ້າຮ່ວມການສຶກສາ

ນັກສຶກສາທີ່ກຳລັງສຶກສາຢູ່ຊັ້ນຮຽນປີທີ 1 ຫາ ປີທີ 3, ນັກສຶກສາທີ່ຢູ່ໃນໄລຍະເວລາຂອງການສອບຖາມ, ຍິນຍອມ ແລະ ສະໝັກໃຈເຂົ້າຮ່ວມໃນການສຶກສານີ້.

### ເງື່ອນໄຂບໍ່ເຂົ້າຮ່ວມການສຶກສາ

ນັກສຶກສາທີ່ສຶກສາຢູ່ຊັ້ນຮຽນປີທີ 4 ຫາ ປີສຸດທ້າຍ, ນັກສຶກສາທີ່ກຳລັງຝຶກງານຢູ່ຕາມໂຮງໝໍ ຫຼື ສູນການແພດແຕ່ລະແຫ່ງ ແລະ ຜູ້ທີ່ບໍ່ສະໝັກໃຈ ຫຼື ບໍ່ຍິນຍອມເຂົ້າຮ່ວມໃນການສຶກສາຄັ້ງນີ້.

### ຂະໜາດຕົວຢ່າງ ແລະ ການສຸ່ມຕົວຢ່າງ

ການສຶກສາຄັ້ງນີ້ ໄດ້ຄິດໄລ່ຂະໜາດຕົວຢ່າງ ຫຼື ຈຳນວນນັກສຶກສາທີ່ຮຽນຢູ່ປີທີ 1 ຫາ ປີທີ 3 ເຊິ່ງໄດ້ກຸ່ມຕົວຢ່າງຈຳນວນ 331 ຄົນ ໂດຍນຳໃຊ້ການສຸ່ມຕົວຢ່າງແບບງ່າຍດາຍ (Sample random sampling) ແລະ ໃຊ້ວິທີເກັບຕົວຢ່າງແບບເຈາະຈົງ (Purposive sampling).

### ວິທີການເກັບຂໍ້ມູນ

ການເກັບຂໍ້ມູນແມ່ນໃຊ້ແບບຟອມສອບຖາມ ໂດຍການສຳພາດເປັນສ່ວນບຸກຄົນ (ໜ້າຊື່ໜ້າ) ແລະ ເກັບຂໍ້ມູນໂດຍນັກຄົ້ນຄວ້າເອງ ແລະ ຜູ້ຊ່ວຍ 01 ຄົນ, ໂດຍໃຊ້ເວລາປະມານ 10 - 20 ນາທີ/ຄົນ. ມີການກວດສອບຂໍ້ມູນຢ່າງສະໝ່ຳສະເໝີໃນຊ່ວງເວລາເກັບກຳຂໍ້ມູນໃນແຕ່ລະວັນ ຫາກມີຂໍ້ມູນຂາດ ຫຼື ເສຍໄປໃຫ້ບັນທຶກຂໍ້ມູນໄວ້ ແລະ ກວດສອບໃນມື້ຕໍ່ມາ.

### ຂະບວນການວິເຄາະຂໍ້ມູນ

ພາຍຫຼັງເກັບຂໍ້ມູນທັງໝົດແລ້ວໄດ້ກວດເບິ່ງແບບຟອມ ເພື່ອຄວາມຖືກຕ້ອງແລ້ວນຳໄປວິເຄາະຂໍ້ມູນດ້ວຍ Program SPSS, ນຳໃຊ້ສະຖິຕິແບບພັນລະນາເພື່ອວິເຄາະຂໍ້ມູນເປັນຈຳນວນຄວາມຖີ່ (Frequency), ສ່ວນຮ້ອຍ (%), ຄ່າສະເລ່ຍ (Mean), ຄ່າເຄິ່ງກາງ (Median), ຄ່າບ່ຽງເບັນມາດຕະຖານ (SD), ຄ່າຕ່ຳສຸດ(Min) ແລະ ຄ່າສູງສຸດ (MAX) ແລະ ນຳໃຊ້ສະຖິຕິແບບປຽບທຽບ student-t test ແລະ F-test (One Way Analysis Of Variance ເພື່ອຊອກຫາຄວາມສຳພັນ.

### ຈັນຍາທຳໃນການຄົ້ນຄວ້າ

ການສຶກສາຄັ້ງນີ້ ແມ່ນໄດ້ຮັບການອານຸມັດຈັນຍາທຳການຄົ້ນຄວ້າ ສະບັບເລກທີ 289/ຄຈຄ, ນະຄອນຫຼວງວຽງຈັນ. ລົງວັນທີ 27/01/2022 ຈາກຄະນະກຳມະການຈັນຍາທຳມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ. ການຄົ້ນຄວ້າຄັ້ງນີ້ຈະບໍ່ສົ່ງຜົນກະທົບທາງດ້ານຮ່າງກາຍ ແລະ ຈິດໃຈຂອງຜູ້ທີ່ເຂົ້າຮ່ວມໃນການສຶກສາ ແລະ ບໍ່ແຕະຕ້ອງເຖິງຈັນຍາທຳແພດ, ການສຶກສານີ້ຈະມີຜົນປະໂຫຍດທາງອ້ອມແກ່ກຸ່ມຕົວຢ່າງທີ່ເຂົ້າຮ່ວມໃນການສຶກສາ ແລະ ເປັນຂໍ້ມູນພື້ນຖານທີ່ສຳຄັນ ໃນການສຶກສາຄັ້ງຕໍ່ໄປ ໃນຄະນະອື່ນໆຂອງ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ແລະ ວົງການແພດລາວໃນອະນາຄົດ.

## ຜົນການຄົ້ນຄວ້າ

### ຄຸນລັກສະນະດ້ານປະຊາກອນສາດ

ຜົນການສຶກສາສະແດງໃຫ້ເຫັນວ່າ ນັກຮຽນສ່ວນຫຼາຍແມ່ນ ເພດຍິງ ເຊິ່ງມີຈຳນວນ 209 ຄົນ ເທົ່າກັບ 63.1%, ຮອງລົງມາແມ່ນເພດຊາຍ ມີຈຳນວນ 122 ຄົນ ເທົ່າກັບ 36.9%; ດ້ານຄະນະວິຊາຮຽນ ສ່ວນຫຼາຍແມ່ນ ຄະນະເຕັກນິກການແພດ ເຊິ່ງມີຈຳນວນ 91 ຄົນ ເທົ່າກັບ 27.5%, ຮອງລົງມາແມ່ນ ຄະນະແພດສາດ ເຊິ່ງມີຈຳນວນ 85 ຄົນ ເທົ່າກັບ 25.7%, ຄະນະເພສັຊສາດ ເຊິ່ງມີຈຳນວນ 65 ຄົນ ເຊິ່ງເທົ່າກັບ 19.6%, ຄະນະພະຍາບານສາດ ເຊິ່ງມີ ຈຳນວນ 59 ຄົນ ເທົ່າກັບ 17.8% ແລະ ໜ້ອຍກວ່າໝູ່ແມ່ນ ຄະນະທັນຕະແພດສາດ ເຊິ່ງມີຈຳນວນ 31 ຄົນ ເທົ່າກັບ 9.4%; ສ່ວນປີຮຽນ ສ່ວນຫຼາຍແມ່ນ ປີ 1 ມີຈຳນວນ 112 ຄົນ ເທົ່າກັບ 33.8%, ຮອງລົງມາແມ່ນ ປີ 3 ມີຈຳນວນ 111 ຄົນ ເທົ່າກັບ 33.5% ແລະ ໜ້ອຍກວ່າໝູ່ແມ່ນ ປີ 2 ມີຈຳນວນ 108 ຄົນ ເທົ່າກັບ 32.6% (ຕາຕະລາງທີ 1).

**ຕາຕະລາງທີ 1: ຂໍ້ມູນທົ່ວໄປ**

| ຕົວຜັນແປ | ຈຳນວນ (n= 331) | ສ່ວນຮ້ອຍ (%) |
|---|---|---|
| **ເພດ** | | |
| ຊາຍ | 122 | 36.9 |
| ຍິງ | 209 | 63.1 |
| **ພາກສ່ວນ** | | |
| ຄະນະແພດສາດ | 85 | 25.7 |
| ຄະນະທັນຕະແພດສາດ | 31 | 9.4 |
| ຄະນະເພສັຊສາດ | 65 | 19.6 |
| ຄະນະພະຍາບານສາດ | 59 | 17.8 |
| ຄະນະເຕັກນິກການແພດ | 91 | 27.5 |
| **ປີຮຽນ** | | |
| ປີ 1 | 122 | 33.8 |
| ປີ 2 | 108 | 32.6 |
| ປີ 3 | 111 | 33.6 |

### ຄວາມຄິດເຫັນການມີສ່ວນຮ່ວມຂອງນັກສຶກສາ

**ດ້ານສົ່ງເສີມວິຊາການ** ພົບວ່າໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກຂໍ້ຢູ່ໃນລະດັບຫຼາຍ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ນັກສຶກສາມີສ່ວນຮ່ວມທີ່ຈະໄດ້ຮັບປະສົບການໃນການຮຽນຮູ້ສິ່ງໃໝ່ໆ ແລະ ນັກສຶກສາມີສ່ວນຮ່ວມໃນການຊອກຮູ້ຫາຮຽນ, ຮອງລົງມາແມ່ນ ນັກສຶກສາມີສ່ວນຮ່ວມໃນການເພີ່ມພູນຄວາມຮູ້ໃນການປະກອບວິຊາຊີບ ແລະ ຂໍ້ທີ່ມີຄ່າສະເລ່ຍ ໜ້ອຍກ່ອນໝູ່ແມ່ນ ນັກສຶກສາມີສ່ວນຮ່ວມໃນການໃຊ້ຄວາມຄິດສ້າງສັນໃນທາງວິຊາການ.

**ດ້ານກິລາ** ພົບວ່າໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາ ແຕ່ລະຂໍ້ພົບວ່າທຸກຂໍ້ຢູ່ໃນລະດັບຫຼາຍ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ນັກສຶກສາມີສ່ວນຮ່ວມໃນການພັດທະນານ້ຳໃຈຂອງນັກກິລາຮູ້ເສຍ ຮູ້ຊະນະ ຮູ້ໃຫ້ອາໄພ, ຮອງລົງມາແມ່ນ ນັກສຶກສາມີສ່ວນຮ່ວມໃນການສ້າງມະນຸດສຳພັນທີ່ດີ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນ ນັກສຶກສາມີສ່ວນຮ່ວມໃນການພັດທະນາສັກກາຍະນະພາບທາງດ້ານກິລາ.

**ດ້ານສິລະປະ-ວັດທະນະທຳ** ພົບວ່າໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາ ແຕ່ລະຂໍ້ພົບວ່າທຸກຂໍ້ຢູ່ໃນລະດັບຫຼາຍ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ນັກສຶກສາມີສ່ວນຮ່ວມໃນການປູກຈິດສຳນຶກການອະນຸລັກ ສິລະປະ-ວັດທະນະທຳລາວ, ຮອງລົງມາແມ່ນ ນັກສຶກສາມີສ່ວນຮ່ວມໃນການຮັບຮູ້ຄຸນຄ່າ ແລະ ຄວາມສຳຄັນຂອງ ສິລະປະ-ວັດທະນະທຳລາວ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນ ນັກສຶກສາມີສ່ວນຮ່ວມໃນການໃຊ້ເວລາຫວ່າງເປັນປະໂຫຍດໃນດ້ານສິລະປະ-ວັດທະນະທຳ.

**ດ້ານອາສາສະໝັກ** ພົບວ່າໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາ ແຕ່ລະຂໍ້ພົບວ່າທຸກຂໍ້ຢູ່ໃນລະດັບຫຼາຍ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ນັກສຶກສາມີສ່ວນຮ່ວມໃນການຮັກສາຄວາມສະອາດຈົບງາມ ຂອງສັງຄົມ, ຮອງລົງມາແມ່ນ ນັກສຶກສາມີສ່ວນຮ່ວມໃນການເຮັດວຽກເປັນທີມ ກັບໝູ່ຄະນະ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນ ນັກສຶກສາມີສ່ວນຮ່ວມໃນການໃຊ້ເວລາຫວ່າງເພື່ອເຮັດປະໂຫຍດຕໍ່ສັງຄົມ (ຕາຕະລາງທີ 2).

**ຕາຕາລາງທີ 2: ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ໂດຍລວມ ແລະ ແຕ່ລະດ້ານ**

| ຂໍ້ | ການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບກິດຈະກຳ | ລະດັບການມີສ່ວນຮ່ວມ (n=331) | | |
|---|---|---|---|---|
| | | $\bar{X}$ | S.D | ແປຜົນ |
| 1 | ດ້ານສົ່ງເສີມວິຊາການ | 3.80 | 0.58 | ຫຼາຍ |
| 2 | ດ້ານກິລາ | 3.91 | 0.65 | ຫຼາຍ |
| 3 | ດ້ານສິລະປະ-ວັດທະນາທຳ | 3.87 | 0.70 | ຫຼາຍ |
| 4 | ດ້ານອາສາສະໝັກ | 3.94 | 0.65 | ຫຼາຍ |
| | **ລວມ** | **3.88** | **0.54** | **ຫຼາຍ** |

## ຜົນວິເຄາະຂໍ້ມູນກ່ຽວກັບການປຽບທຽບຄວາມຄິດເຫັນການມີສ່ວນຮ່ວມຂອງນັກສຶກສາ

ຕາຕະລາງທີ 3 ສະແດງຜົນການປຽບທຽບຄວາມຄິດເຫັນ ການມີສ່ວນຮ່ວມຂອງນັກສຶກສາ ໂດຍຈຳແນກຕາມເພດ ພົບວ່າ: ນັກສຶກສາມີເພດຕ່າງກັນ ການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບ ກິດຈະກຳນັກສຶກສາ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ໂດຍລວມ ແລະ ແຕ່ລະດ້ານບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ສະແດງວ່າເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

**ຕາຕາລາງທີ 3: ການປຽບທຽບຄວາມຄິດເຫັນການມີສ່ວນຮ່ວມຂອງນັກສຶກສາ ໂດຍຈຳແນກຕາມເພດ**

| ຂໍ້ | ການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບກິດຈະກຳ | ເພດຊາຍ (n=122) | | ເພດຍິງ (n=209) | | t-test | p-value |
|---|---|---|---|---|---|---|---|
| | | $\bar{X}$ | S.D | $\bar{X}$ | S.D | | |
| 1 | ດ້ານສົ່ງເສີມວິຊາການ | 3.80 | 0.57 | 3.81 | 0.60 | 0.09- | 0.925 |
| 2 | ດ້ານກິລາ | 3.97 | 0.64 | 3.88 | 0.66 | 1.29 | 0.197 |
| 3 | ດ້ານສິລະປະ-ວັດທະນາທຳ | 3.84 | 0.70 | 3.89 | 0.71 | 0.68- | 0.495 |
| 4 | ດ້ານອາສາສະໝັກ | 3.94 | 0.62 | 3.94 | 0.67 | 0.00 | 0.999 |
| | **ລວມ** | **3.89** | **.052** | **3.88** | **0.56** | **0.14** | **0.888** |

ຜົນການສຶກສາໃນຕາຕະລາງທີ 4 ພົບວ່ານັກສຶກສາທີ່ມີຊັ້ນປີຮຽນແຕກຕ່າງກັນ ການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບ ກິດຈະກຳນັກສຶກສາ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ໂດຍລວມ ແລະ ແຕ່ລະດ້ານ ບໍ່ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ສະແດງວ່າບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

**ຕາຕະລາງທີ 4: ການປຽບທຽບຄວາມຄິດເຫັນການມີສ່ວນຮ່ວມຂອງນັກສຶກສາ ໂດຍຈຳແນກຕາມຊັ້ນປີຮຽນ**

| ຂໍ້ | ການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບກິດຈະກຳ | ປີ 1 n=112 | | ປີ 2 n=108 | | ປີ 3 n=111 | |
|---|---|---|---|---|---|---|---|
| | | X̄ | S.D | X̄ | S.D | X̄ | S.D |
| 1 | ດ້ານສົ່ງເສີມວິຊາການ | 3.85 | 0.56 | 3.87 | 0.53 | 3.77 | 0.65 |
| 2 | ດ້ານກິລາ | 3.98 | 0.62 | 3.85 | 0.62 | 3.89 | 0.71 |
| 3 | ດ້ານສິລະປະ-ວັດທະນາທຳ | 3.84 | 0.66 | 3.89 | 0.62 | 3.88 | 0.81 |
| 4 | ດ້ານອາສາສະໝັກ | 3.90 | 0.64 | 3.98 | 0.61 | 3.94 | 0.69 |
| | **ລວມ** | **3.90** | **0.52** | **3.88** | **0.49** | **3.87** | **0.60** |

ຕາຕະລາງທີ 5 ພົບວ່າ ນັກສຶກສາທີ່ຮຽນຢູ່ໃນຄະນະວິຊາແຕກຕ່າງກັນ ການມີສ່ວນຮ່ວມຂອງນັກສຶກຕໍ່ກັບ ກິດຈະກຳນັກສຶກສາ ມະຫາວິທະຍາໄລ ວິທະຍາສາດສຸຂະພາບໂດຍລວມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ແຕ່ເມື່ອພິຈາລະນາແຕ່ລະດ້ານແລ້ວເຫັນວ່າ ດ້ານສົ່ງເສີມວິຊາການ, ດ້ານກິລາ ແລະ ດ້ານສິລະປະ-ວັດທະນະທຳ ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ສ່ວນດ້ານອາສາສະໝັກບໍ່ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ດັ່ງນັ້ນ, ຜູ້ຄົ້ນຄວ້າຈຶ່ງຕ້ອງຊອກຫາຄວາມແຕກຕ່າງລະຫວ່າງຄູ່ດ້ວຍວິທີຂອງ (Scheffe) ຫຼື ວິທີຂອງ Tukey’s HSD ຜົນຂອງການວິເຄາະສະຫຼຸບໄດ້ດັ່ງລຸ່ມນີ້:

**ຕາຕະລາງທີ 5: ປຽບທຽບຄວາມຄິດເຫັນການມີສ່ວນຮ່ວມຂອງນັກສຶກສາ ໂດຍຈຳແນກຕາມຄະນະວິຊາຮຽນ**

| ຂໍ້ | ການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບກິດຈະກຳ | ຄະນະແພດສາດ n=85 | | ຄະນະທັນຕະແພດສາດ n=31 | | ຄະນະເພສັຊສາດ n=65 | | ຄະນະພະຍາບານສາດ n=59 | | ຄະນະເຕັກນິກການແພດ n=91 | |
|---|---|---|---|---|---|---|---|---|---|---|---|
| | | X̄ | S.D | X̄ | S.D | X̄ | S.D | X̄ | S.D | X̄ | S.D |
| 1 | ດ້ານສົ່ງເສີມວິຊາການ | 3.75 | 0.67 | 3.51 | 0.56 | 3.67 | 0.58 | 3.86 | 0.56 | 4.00 | 0.44 |
| 2 | ດ້ານກິລາ | 3.81 | 0.74 | 3.74 | 0.87 | 3.81 | 0.65 | 3.97 | 0.50 | 4.08 | 0.50 |
| 3 | ດ້ານສິລະປະ-ວັດທະນາທຳ | 3.77 | 0.84 | 3.58 | 0.77 | 3.77 | 0.68 | 4.00 | 0.61 | 4.05 | 0.54 |
| 4 | ດ້ານອາສາສະໝັກ | 3.96 | 0.69 | 3.68 | 0.74 | 3.88 | 0.66 | 4.03 | 0.58 | 4.00 | 0.59 |
| | **ລວມ** | **3.82** | **0.64** | **3.63** | **0.63** | **3.78** | **0.50** | **3.97** | **0.46** | **4.03** | **0.43** |

## ຜົນການວິເຄາະປຽບທຽບຄວາມແຕກຕ່າງເປັນລາຍຄູ່

ຜົນການທົດສອບຄວາມແຕກຕ່າງຂອງນັກສຶກສາ ທີ່ຮຽນຢູ່ຄະນະວິຊາທີ່ກ່ຽວກັບການມີສ່ວນຮ່ວມຂອງນັກນັກສຶກສາຕໍ່ກັບກິດຈະກຳໃນ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ດ້ານສົ່ງເສີມວິຊາການ ເປັນລາຍຄູ່ ພົບວ່າ ຄະນະທັນຕະແພດສາດ ແລະ ຄະນະເຕັກນິກການແພດ ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05, ນອກຈາກນັ້ນ ຄະນະເພສັຊສາດ ແລະ ຄະນະແຕັກນິກການແພດ ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ໂດຍຄະນະເຕັກນິກການແພດ ມີຄ່າສະເລ່ຍ ການມີສ່ວນຮ່ວມຂອງນັກສຶກສາສູງກວ່າ ຄະນະພະຍາບານສາດ, ຄະນະແພດສາດ, ຄະນະເພສັຊສາດ ແລະ ຄະນະທັນຕະແພດສາດ.

**ຕາຕະລາງທີ 6: ປຽບທຽບຄວາມແຕກຕ່າງເປັນລາຍຄູ່ຂອງ ດ້ານສົ່ງເສີມວິຊາການ ຂອງຄະນະວິຊາຮຽນ**

| ດ້ານສົ່ງເສີມວິຊາການ | X̄ | ຄະນະວິຊາຮຽນຂອງນັກສຶກສາ | | | | |
|---|---|---|---|---|---|---|
| | | ຄະນະ ແພດສາດ | ຄະນະທັນຕະ ແພດສາດ | ຄະນະ ເພສັຊສາດ | ຄະນະ ພະຍາບານສາດ | ຄະນະເຕັກນິກ ການແພດ |
| | | **3.75** | **3.51** | **3.67** | **3.86** | **4.00** |
| **ຄະນະແພດສາດ** | 3.75 | - | 0.241 | 0.085 | -0.108 | -0.243 |
| **ຄະນະທັນຕະແພດສາດ** | 3.51 | -0.241 | - | -0.156 | -0.350 | -0.485* |
| **ຄະນະເພສັຊສາດ** | 3.67 | -0.085 | 0.156 | - | -0.194 | -0.329* |
| **ຄະນະພະຍາບານສາດ** | 3.86 | 0.108 | 0.350 | 0.194 | - | -0.134 |
| **ຄະນະເຕັກນິກການແພດ** | 4.00 | 0.243 | 0.485* | 0.329* | 0.134 | - |

* ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

ຕາຕະລາງທີ 7 ສະແດງຜົນການທົດສອບຄວາມແຕກຕ່າງຂອງນັກສຶກສາ ທີ່ຮຽນຢູ່ຄະນະວິຊາກ່ຽວກັບ ການມີສ່ວນຮ່ວມຂອງນັກສຶກສາຕໍ່ກັບ ກິດຈະກຳນັກສຶກສາ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ດ້ານກິລາ ເປັນລາຍຄູ່ ດ້ວຍວິທີຂອງ Tukey's HSD ພົບວ່າ ຄະນະແພດສາດມີຄວາມແຕກຕ່າງກັບ ຄະນະເຕັກນິກການແພດ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ໂດຍຄະນະເຕັກນິກການແພດ ມີຄ່າສະເລ່ຍ ການມີສ່ວນຮ່ວມຂອງນັກສຶກສາ ສູງກວ່າ ຄະນະພະຍາບານສາດ, ຄະນະແພດສາດ, ຄະນະເພສັຊສາດ ແລະ ຄະນະທັນຕະແພດສາດ.

**ຕາຕະລາງທີ 7: ປຽບທຽບຄວາມແຕກຕ່າງເປັນລາຍຄູ່ຂອງ ດ້ານກິລາ ຂອງຄະນະວິຊາຮຽນ.**

| ດ້ານກິລາ | X̄ | ຄະນະວິຊາຮຽນຂອງນັກສຶກສາ | | | | |
|---|---|---|---|---|---|---|
| | | ຄະນະ ແພດສາດ | ຄະນະທັນຕະ ແພດສາດ | ຄະນະ ເພສັຊສາດ | ຄະນະ ພະຍາບານສາດ | ຄະນະເຕັກນິກ ການແພດ |
| | | **3.81** | **3.47** | **3.81** | **3.97** | **4.08** |
| **ຄະນະແພດສາດ** | 3.81 | - | 0.075 | -0.000 | -0.159 | -0.267* |
| **ຄະນະທັນຕະແພດສາດ** | 3.74 | -0.075 | - | -0.076 | -0.235 | -0.343 |
| **ຄະນະເພສັຊສາດ** | 3.81 | 0.000 | 0.076 | - | -0.159 | -0.267 |
| **ຄະນະພະຍາບານສາດ** | 3.97 | 0.159 | 0.235 | 0.159 | - | -0.107 |
| **ຄະນະເຕັກນິກການແພດ** | 4.08 | 0.267* | 0.343 | 0.267 | 0.107 | - |

* ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

ຕາຕະລາງທີ 8 ສະແດງການທົດສອບຄວາມແຕກຕ່າງຂອງນັກສຶກສາ ທີ່ຮຽນຢູ່ຄະນະວິຊາກ່ຽວກັບ ການມີສ່ວນຮ່ວມຂອງນັກນັກສຶກສາຕໍ່ກັບ ກິດຈະກຳນັກສຶກສາ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ດ້ານສິລະປະວັດທະນະທຳ ເປັນລາຍຄູ່ ພົບວ່າ ຄະນະທັນຕະແພດສາດ ແລະ ຄະນະເຕັກນິກການແພດ ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05, ໂດຍຄະນະເຕັກນິກການແພດ ມີຄ່າສະເລ່ຍ ການມີສ່ວນຮ່ວມຂອງນັກສຶກສາ ສູງກວ່າ ຄະນະພະຍາບານສາດ, ຄະນະແພດສາດ, ຄະນະເພສັຊສາດ ແລະ ຄະນະທັນຕະແພດສາດ.

**ຕາຕະລາງທີ 8: ປຽບທຽບຄວາມແຕກຕ່າງເປັນລາຍຄູ່ຂອງ ດ້ານສິລະປະ-ວັດທະນາທຳ ຂອງຄະນະວິຊາຮຽນ.**

| ດ້ານສິລະ-ປະວັດທະນາທຳ | $\bar{X}$ | ຄະນະວິຊາຮຽນຂອງນັກສຶກສາ | | | | |
|---|---|---|---|---|---|---|
| | | ຄະນະ ແພດສາດ | ຄະນະທັນຕະ ແພດສາດ | ຄະນະ ເພສັຊສາດ | ຄະນະ ພະຍາບານສາດ | ຄະນະເຕັກນິກ ການແພດ |
| | | **3.77** | **3.58** | **3.77** | **4.00** | **4.05** |
| **ຄະນະແພດສາດ** | 3.77 | - | 0.192 | -0.001 | -0.232 | -0.284 |
| **ຄະນະທັນຕະແພດສາດ** | 3.58 | -0.192 | - | -0.194 | -0.425 | -0.477* |
| **ຄະນະເພສັຊສາດ** | 3.77 | 0.001 | 0.194 | - | -0.231 | -0.283 |
| **ຄະນະພະຍາບານສາດ** | 4.00 | 0.232 | 0.425 | 0.231 | - | -0.051 |
| **ຄະນະເຕັກນິກການແພດ** | 4.05 | 0.284 | 0.477* | 0.283 | 0.051 | - |

## ການສົນທະນາ

ຜົນການສຶກສາດ້ານສົ່ງເສີມວິຊາການ ໂດຍລວມ ແມ່ນຢູ່ໃນລະດັບຫຼາຍເນື່ອງຈາກນັກສຶກສາມີສ່ວນຮ່ວມໃນການຊອກຮູຮ່ຳຮຽນ ແລະ ໄດ້ຮັບປະສົບການໃໝ່ ເຊິ່ງມັນສອດຄອງກັບຫຼາຍການຄົ້ນຄ້ວາ ຂອງທ່ານ ນາຊາພັດ ວົງສຸວັນ ພ້ອມຄະນະ, ປີ 2019 ພົບວ່າການມີສ່ວນຮ່ວມດ້ານສົ່ງເສີມວິຊາການ ແມ່ນຢູ່ໃນລະດັບຫຼາຍ (ນິຊາພັດ ວົງສຸວັນ, 2019, ໜ້າ. 15-19), ນອກຈາກນີ້, ຍັງສອດຄ້ອງກັບການຄົ້ນຄ້ວາຂອງທ່ານ Sarak, P. (2013) ຢູ່ປະເທດໄທ, ກັບການວິໃຈຂອງ Sunandha ປີ 2019 (Sunandha, 2019).

ດ້ານກິລາ ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງເຫັນໄດ້ຈາກການວິເຄາະຄວາມຄິດເຫັນຂອງນັກສຶກສາເຊັ່ນ: ໃນການພັດທະນານ້ຳໃຈນັກກິລາຮູ້ເສຍ ຮູ້ຊະນະ ຮູ້ໃຫ້ອາໄພ ໃນການສ້າງມະນຸດສຳພັນທີ່ດີ ແລະ ເຮັດວຽກເປັນທີມໄດ້ດີ, ປະຕິບັດວິໄນ ເຄົາລົບກະຕິກາ ມາລະຍາດໃນການຫຼິ້ນກິລາເພື່ອສົ່ງເສີມ ແລະ ປູກຈິດສຳນຶກ ໃນການຫຼິ້ນກິລາເພື່ອສຸຂະພາບ, ມີສ່ວນຊ່ວຍໃນການສົ່ງເສີມຝຶກຄວາມອົດທົນຂອງຈິດໃຈ ເຊິ່ງຈະເຮັດໃຫ້ເກີດມີເຈດຕະນາທີ່ດີຕໍ່ການຫຼິ້ນກິລາ, ເປັນການໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ ແລະ ສະແດງຄວາມສາມາດໃນດ້ານກິລາ, ເຊິ່ງສອດຄ່ອງກັບປຶ້ມການບໍລິຫານກິດຈະການນັກສຶກສາຂອງ ທ່ານ ລາໄມ ພິພັກຂະວົງ ພ້ອມຄະນະ, ປີ 2008 ສະແດງໃຫ້ເຫັນວ່າ ຈຳນວນນັກສຶກສາ 450 ຄົນ ມີສ່ວນຮ່ວມດ້ານກິລາ ແມ່ນຢູ່ໃນລະດັບຫຼາຍ (ລຳໄມ ພິພັກຂະວົງ, 2008, ໜ້າ. 32-34) ແລະ ຍັງສອດຄອດກັບການວິໃຈຂອງ ທ່ານKljaevic ພ້ອມຄະນະ, ປີ 2022 ພົບວ່າການມີສ່ວນຮ່ວມກິດຈະກຳໃນດ້ານກິລາ ຂອງນັກສຶກສາ ແມ່ນຢູ່ໃນລະດັບຫຼາຍ (Kljajević et al., 2022).

ດ້ານສິລະປະ-ວັດທະນະທຳ ໂດຍລວມຢູ່ໃນລະດັບຫຼາຍເນື່ອງຈາກວ່າ ນັກສຶກສາໄດ້ມີສ່ວນຮ່ວມໃນການສົ່ງເສີມໃນການປູກຈິດສຳນຶກການອະນຸລັກ ສິລະປະ-ວັດທະນະທຳລາວ, ໄດ້ຮັບຮູ້ເຖິງຄຸນຄ່າ ແລະ ຄວາມສຳຄັນຂອງສິລະປະ-ວັດທະນະທຳ ເຮັດໃຫ້ນັກສຶກສາເກີດຄວາມຮັກຄວາມພູມໃຈໃນ ສິລະປະ-ວັດທະນະທຳລາວ, ມີສ່ວນຮ່ວມໃນການສືບທອດ ແລະ ເຜີຍແຜ່ ສິລະປະ-ວັດທະນະທຳຂອງຊາດລາວສູ່ສັງຄົມ, ມີຄວາມຄິດລິເລີ່ມສ້າງສັນໃນການສືບທອດ ອະນຸລັກ ຮີດຄອງປະເພນີອັນດີງາມຂອງຊາດລາວ ເກີດມີຄວາມຮັບຮູ້ເຂົ້າໃຈ ກ້າເຮັດ ກ້າສະແດງອອກ ໃນສິລະປະ-ວັດທະນະທຳອັນດີງາມຂອງຊາວລາວເຮົາ, ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງທ່ານ ທອງວິໄລ ທອມສົມບັດ, 2015 ຜົນການສຶກສາພົບວ່າ ການມີສ່ວນຮ່ວມທາງດ້ານກິດຈະກຳຂອງນັກສຶກສາ ໃນດ້ານສິລະປະ-ວັດທະນາທຳ ແມ່ນຢູ່ໃນລະດັບຫຼາຍ (ທອງວິໄລ ທອມສົມບັດ, 2015) ເພາະວ່າທາງໂຮງຮຽນໄດ້ສົ່ງເສີມໃຫ້ມີກິດຈະກຳດ້ານປະເພນີວັດທະນະທຳຫຼາຍຂຶ້ນ ສົ່ງເສີມໃຫ້ມີການຈັດກິດຈະກຳອະນຸລັກສິລະປະ ແລະ ຮີດຄອງປະເພນີລາວ.

ດ້ານອາສາສະໝັກ ໂດຍລວມຢູ່ໃນລະດັບຫຼາຍເນື່ອງຈາກວ່າ ມີການສົ່ງເສີມນັກສຶກສາມີສ່ວນຮ່ວມໃນການຮັກສາຄວາມສະອາດ ຈົບງານຂອງສັງຄົມ ຮ່ວມເຮັດວຽກເປັນທີມກັບໝູ່ຄະນະໃນການປະກອບສ່ວນ, ຊ່ວຍເຫຼືອ ແລະ ມີຄວາມຮັບຜິດຊອບ ຕໍ່ສັງຄົມກໍ່ຄືເພື່ອຜົນປະໂຫຍດຂອງສ່ວນລວມ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ທ່ານ ພົມພອນ ສາຣັກ ພ້ອມຄະນະ, ປີ 2022 ຈຳນວນຜູ້ເຂົ້າຮ່ວມທັງໝົດ 422 ຄົນ ພົບວ່າການມີສ່ວນຮ່ວມໃນດ້ານອາສາສະໝັກ ແມ່ນຢູ່ໃນລະດັບຫຼາຍ (ພົມພອນ ສາຣັກ, 2022) ນອກຈາກນັ້ນ, ການສຶກສາຂອງສະຖາບັນເທັກໂນໂລຊີພຣະຈອມເກົ້າເຈົ້າຄຸນທະຫານລາດກະບັງ ພົບວ່ານັກສຶກສາມີສ່ວນຮ່ວມໃນກິດຈະກຳນັກສຶກສາ ດ້ານອາສາສະໝັກໃນລະດັບຫຼາຍ ເນື່ອງຈາກວ່າສະຖາບັນ ໄດ້ສົ່ງເສີມໃຫ້ນັກສຶກສາມີຈິດສຳນຶກທີ່ດີໃນການຮັບຜິດຊອບ ແລະ ຊ່ວຍເຫຼືອສັງຄົມ, ໄດ້ມີການສົ່ງເສີມໃຫ້ນັກສຶກສາໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ, ມີຄວາມອົດທົນໃນການເຮັດວຽກເປັນທີມ

ຮູ້ຈັກເສຍສະຫຼະປະໂຫຍດສ່ວນຕົວເພື່ອຜົນປະໂຫຍດສ່ວນລວມ, ມີການປູກຈິດສຳນຶກທີ່ດີໃຫ້ນັກສຶກສາໄດ້ມີສ່ວນຮ່ວມໃນການຮັກສາສິ່ງແວດລ້ອມ ແລະ ສົ່ງເສີມໃຫ້ນັກສຶກສາມີສ່ວນຮ່ວມໃນການພັດທະນາສັງຄົມ (ສະຖາບັນເທັກໂນໂລຊີພຣະຈອມເກົ້າ, 2018).

## ຂໍ້ຈຳກັດໃນການຄົ້ນຄວ້າ

ຄວນຈະທົດສອບພິຈາລະນາຂໍ້ຈຳກັດບາງຢ່າງ ກ່ຽວກັບແບບຟອມສອບຖາມ ໃນທາງດ້ານຄຸນນະພາບ ແລະ ຄວາມທ່ຽງຕົງ ໃຫ້ເປັນທາງການ ກ່ອນການເກັບຂໍ້ມູນໂຕຈິງ.

ການປະຊາສຳພັນກ່ຽວກັບການເຂົ້າຮ່ວມການສຶກສາໃນຄັ້ງນີ້, ແມ່ນຍັງບໍ່ທົ່ວເຖິງທຸກພາກສ່ວນ, ທຸກຊັ້ນຮຽນ ແລະ ບໍ່ກວບລວມນັກສຶກສາໄດ້ໝົດທຸກຄົນ.

## ຂໍ້ສະເໜີແນະສຳລັບການຄົ້ນຄວ້າໃນອະນາຄົດ

1) ຄວນສຶກສາ ການມີສ່ວນຮ່ວມຂອງຄູໃນການບໍລິຫານກິດຈະກຳນັກສຶກສາ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ.
2) ຄວນສຶກສາ ການມີສ່ວນຮ່ວມຂອງຊຸມຊົນ ຕໍ່ກັບກິດຈະກຳນັກສຶກສາ ໃນ ໂຮງຮຽນ, ວິທະຍາໄລ ແລະ ມະຫາວິທະຍາໄລຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.
3) ຄວນສຶກສາແຮງຈູງໃຈ ໃນການມີສ່ວນຮ່ວມກິດຈະກຳນັກສຶກສາ ຂອງນັກສຶກສາ ໃນ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ.
4) ຄວນສຶກສາ ການບໍລິຫານ ວຽກງານກິດຈະການນັກສຶກສາ ໃນ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ.

## ສະຫຼຸບ

ນັກສຶກສາຈາກຄະນະຕ່າງໆ ມີຄວາມຄິດເຫັນຕໍ່ກັບການມີສ່ວນຮ່ວມກິດຈະກຳນັກສຶກສາຂອງ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ໂດຍລວມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິ ແລະ ເມື່ອພິຈາລະນາແຕ່ລະດ້ານແລ້ວ ເຫັນວ່າ ດ້ານສົ່ງເສີມວິຊາການ, ດ້ານກິລາ ແລະ ດ້ານສິລະປະ-ວັດທະນະທຳ ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນ, ຍົກເວັ້ນ ດ້ານອາສາສະໝັກ.

## ຄຳຂອບໃຈ

ຜູ້ເຮັດການຄົ້ນຄວ້າ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງທ່ານ ອະທິການບໍດີ, ມວສ, ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງຜູ້ຮ່ວມການຄົ້ນຄວ້າ ທັງ 3 ທ່ານ ທີ່ໄດ້ຊອກຫາຄົ້ນຄວ້າບົດຄວາມຕ່າງໆ ແລະ ຖ່າຍທອດຄວາມຮູ້ໃຫ້ແກ່ຂ້າພະເຈົ້າໂດຍດີຕະຫຼອດມາ. ຂໍສະແດງຄວາມຂອບໃຈມາຍັງການຈັດຕັ້ງທຸກພາກສ່ວນທີ່ໄດ້ໃຫ້ຄວາມຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ ຕະຫຼອດໄລຍະຂອງການສຶກສາໃນຄັ້ງນີ້.

## ຂໍ້ຄັດແຍ້ງ

ການຄົ້ນຄ້ວາວິທະຍາສາດ ໃນຄັ້ງນີ້ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## ເອກະສານອ້າງອີງ


1. ກະຊວງສາທາລະນະສຸກ. (2014). ກົດໝາຍວ່າດ້ວຍການປິ່ນປົວ. ນະຄອນຫຼວງວຽງຈັນ: ກະຊວງສາທາລະນະສຸກ.
2. ຄະນະອົບຮົມສູນກາງພັກ. (2012). ແຜນພັດທະນາເສດຖະກິດ-ສັງຄົມ ສີ່ບຸກທະລຸຂອງຂະແໜງການສຶກສາ. ນະຄອນຫຼວງວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ.
3. ທອງວິໄລ ທອນສົມບັດ (2015). ການບໍລິຫານກິດຈະການນັກສຶກສາ ຂອງຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.
4. ນິຊາພັດ ວົງສຸວັນ. (2553). ງານກິດຈະກຳນັກສຶກສາ. ກຸງເທບ: ກອງກິດຈະການນັກສຶກສາ.
5. ພິມພອນ ສາຮັກ. (2556). ຄວາມຄິດເຫັນຂອງນັກສຶກສາຕໍ່ການເຂົ້າຮ່ວມກິດຈະກຳນັກສຶກສາສະຖາບັນເທກໂນໂລຍີພຣະຈອມເກົ້າເຈົ້າຄຸນທະຫານລາດກະບັງ[ບົດຄັດຫຍໍ້]. ກຸງເທບ: ສະຖາບັນເທກໂນໂລຊີ.
6. ມະຫາວິທະຍາໄລວິທະຍາສາດສຸຂະພາບ. (2019). ຂໍ້ຕົກລົງວ່າດ້ວຍການຈັດຕັ້ງແລະເຄື່ອນໄຫວຂອງພະແນກກິດຈະການນັກສຶກສາ. ນະຄອນຫຼວງວຽງຈັນ: ມະຫາວິທະຍາໄລ ວິທະຍາສາດສຸຂະພາບ.
7. ມະຫາວິທະໄລວິທະຍາສາດສຸຂະພາບ. (2017). ດຳລັດວ່າດ້ວຍການຈັດຕັ້ງ ເຄື່ອນໄຫວຂອງມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ. ນະຄອນຫຼວງວຽງຈັນ: ມະຫາວິທະຍາໄລ ວິທະຍາສາດສຸຂະພາບ.
8. ລຳໄມ ພິພັກຂະວົງ. (2008). ການບໍລິຫານກິດຈະການນັກສຶກສາ. ນະຄອນຫຼວງວຽງຈັນ: ມະຫາວິທະຍາໄລແຫ່ງຊາດ.
9. ຫ້ອງການວິຊາການ. (2020). ບົດສະຫຼຸບປະຈຳປີ2019-2020ຂອງຫ້ອງການວິຊາການ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ.

10. Sarak, P. (2013). Students' Opinions on Student Activity Participation at King Mongkut's Institute of Technology Ladkrabang.
11. Kljajević, V., Stanković, M., Đorđević, D., Trkulja-Petković, D., Jovanović, R., Plazibat, K., Oršolić, M., Čurić, M., & Sporiš, G. (2022). Physical activity and physical fitness among university students systematic review. *International Journal of Environmental Research and Public Health*, *19*(1). https://doi.org/10.3390/ijerph19010158
12. Sunandha, S. (2019). Students' opinions on participating in extra curriculum activities at the faculty of science and technology ,. 68–72.

# Students' Participation in their Extra-Curriculum Activities at the University of Health Sciences

Viengxay Thammavongsa[1], Akao Lyvongsa[2,3], Bounthom Samontry[2], Viengnakhone Donephasith[1], Khambai Thammavongsa[2], Manivone Phanthavong[3], Phoutthasone Thammavongsa[3]

1. Activity Department, University of Health Sciences, Vientiane Capital, Lao PDR
2. Administration Department, University of Health Sciences, Vientiane Capital, Lao PDR
3. Faculty of Dentistry, University of Health Sciences, Vientiane Capital, Lao PDR

Received 23 April 2022; received in revised version 20 June 2022; accepted for publication 20 October 2022

## Abstract

**Background and rationale**: The Institute of Higher Education in Medical Sciences has a key role to play in the made of personnel in response to strategic plans for optimizing health worker staffing. Student participation is an important element in helping to develop the characteristics of a comprehensively able student.

**Objective:** To study the students' participation towards students 'activities at the University of Health Sciences.

**Methodology:** This study was a cross-sectional descriptive study of year 1 – 3 students who gave consent to study. Data were collected by using questionnaires during face-to-face interviews. The data were entered in Epi-data and analyzed by SPSS.

**Results:** Of a total of 331 participants, more than half (63.1%) were female. The students' participation to activities were high ($\bar{X}$= 3.88 over 5, S.D= 0.54). When considering for each componente, it was found thatn the participation to the academic promotion was high level ($\bar{X}$= 3.80, S.D= 0.58), to the sports events was at high level (($\bar{X}$= 3.91, S.D= 0.65), to the cultural arts was also at high level ($\bar{X}$= 3.87, S.D= 0.70), and to the volunteer aspect was high level ($\bar{X}$ = 3.94, S.D= 0.65). Gender segregation for each participation was not statistically significant at the 0.05 level.

**Conclusion:** The students from faculties have different opinions on participation to extra-curriculum activities particularly on the promotion of academics, sports, arts and culture, with the exception of volunteers.

**Copyright:** © 2022 Thammavongsa *et al*. This is an open-access article distributed under the terms of the Creative Commons Attribution Licence, which permits unrestricted use, distribution, and reproduction in any medium, provided the original author and source are credited.

**Keywords:** Participation, student activities, University of Health Sciences

***Corresponding author:** Viengxay Thammavongsa, Tel: 020 5540 2836, Email: Sayvonh@hotmail.com